# ດີໃຈທີ່ໄດ້ຍິນຂ່າວ

ຈາກ ອ້າຍອິນທະຫວາ ຫອມອ່ອນ

ດອນເອີຍ    ອ້າຍໄດ້ນັ່ງຢູ່ບ້ານ    ພວມເປີດເບິ່ງວີດີໂອ
ທັງອ່ານ Email ນາງ    ຄຳຕອບກອນຂອງເຈົ້າ
"ຂອບໃຈເດີ" ນາງເວົ້າ    ວ່າອວນຊາຍອ້າຍຖາມຂ່າວ
"ບໍ່ເປັນຫຍັງນ້ອງຫລ້າ"    ຫວາອ້າຍຫາກຫ່ວງນຳ ແທ້ໃດ

ບັດນີ້    ອ້າຍໄດ້ຮູ້ຂ່າວເຈົ້າ    ກໍຊື່ນແນ່ໃນໃຈ
ຄວາມອາໄລອາວອນ    ກໍບໍ່ໜັກຄືກີ້
ຄວາມສຳພັນເຮົານີ້    ໃຫ້ຄືກັນກັບນ້ອງພີ່
ຢ່າໃຫ້ຄືກ່ອນກີ້    ປາງອ້າຍບໍ່ຈື່ນາງ ນ້ອງເອີຍ

ຕອນນີ່ງ    ນ້ອງໄດ້ບອກຂ່າວໄວ້    ວ່າອຸກອັ່ງໃນໃຈ ວ່າຊັ້ນ
ຈັກວ່າເປັນແນວໃດ    ນ້ອງເປີດເຜີຍບໍ່ມີໄດ້
ນາງເອີຍ    ຢ່າເກັບເອົາມັນໄວ້    ໃນໃຈເຈົ້າເດີອຸ່ນ
ຄວາມວາຍໆວຸ້ນໆ    ໃຫ້ໂຍນຖິ້ມຫ່າງໄກ ນ້ອງເອີຍ

ນ້ອງວ່າ    ຊີວິດຂອງເຈົ້ານັ້ນ    ເໝືອນຢູ່ກາງນະທີ ວ່າຊັ້ນ
**ບໍ່ເຄີຍມີຄວາມຫວັງ**    ຕະຝັ່ງໄກເກີນຟ້າ
ນ້ຳຕາໄຫລນອງໜ້າ    ທະເລຫລວງຈື່ງປຸນປຽບ
ຫຽບເອົາຄວາມທຸກນ້ອງ    ສວັນສ້າງສິ່ງມາ ວ່າຊັ້ນ

ເພິ່ນວ່າ    ເຮົາເຈັບອີກປານໄປໄໝ້    ເຈັບໃຈປານຟ້າຜ່າ ໃດນໍ
ຈັກວ່ານ້ອງຜູ້ຂ້າ    ແມ່ນເຈັບແທ້ເຣື່ອງອັນໃດ ບໍ່ຮູ້
ວັນນີ້    ອ້າຍຢາກບອກໃຫ້ຮູ້    ເພື່ອຊູຊ່ອຍແຮງໃຈ ນາງເອີຍ
ໃຫ້ເຈົ້າໄລລາປະ    ສິ່ງທີ່ພາໃຈເສົ້າ

ຄິດເບິ່ງ    ຊີວິດເຮົາມັນສັ້ນ    ຢ່າງຶມມັນຄວາມອຸກອັ່ງ
ນ້ອງຜິດຫວັງຊຸດນີ້    ທີໜ້າອາດຈະດີ ນ້ອງເອີຍ

| | | |
|---|---|---|
| | ອັນວ່າເຣື່ອງແບບນີ້ | ມັນມີທົ່ວໂລກາ |
| | ໃຫ້ເຈົ້າລືມມັນສາ | ແລ້ວເບິ່ງໄປພາຍໜ້າ |
| ດອນເອີຍ | ພຣະເຈົ້າເອົາຫລາຍໃຫ້ | ເປັນຂອງຂວັນອັນລ້ຳຄ່າ ເດນາງ |
| | ໝູ່ກໍມີມາກໜ້າ | ບຸດນ້ອຍກໍຮັກແພງ ຢູ່ເດ |
| | ເງິນກໍບໍ່ເຫືອດແຫ້ງ | ເຮືອນຢູ່ກໍຄືເຂົາ ນ້ອງເອີຍ |
| | ຢ່າສູ່ເມົາມົວຄິດ | ສິ່ງບໍ່ດີພາເສົ້າ |
| ຍັງເດີ | ຍັງມີອົງພຣະເຈົ້າ | ຜູ້ຊົງຮັກນາງດອນ ນ້ອງເອີຍ |
| | ບໍ່ມີທາງຜິດຫວັງ | ຖ້າເຊື່ອຟັງພຣະອົງເຈົ້າ |
| | ບໍ່ແມ່ນຊາຍມາເວົ້າ | ມົວເມົາບໍ່ຮູ້ຮ່ອມ ໃດນາງ |
| ຄວາມຈິງ | ບໍ່ມີໃຜຜ່າມ້າງ | ແປງປີ້ນປ່ຽນໄປ ໄດ້ໃດ |
| ອັນນຶ່ງ | ຄວາມຫວັງໃນໂລກນີ້ | ມີແຕ່ສິ່ງອະນິຈັງ ໃດເນີ |
| | ຈັກໜ່ອຍເຮົາຫັນຫລັງ | ຊິຈາກໄປໝົດກ້ຽງ |
| | ອາຍຸການໝົດສ້ຽງ | ຈະປະໄປໝົດທຸກຢ່າງ |
| | ສິ່ງທີ່ເຮົາກໍ່ສ້າງ | ກໍໜີຈ້ອຍບໍ່ຫ່ວງຫຍັງ ນ້ອງເອີຍ |
| ດັ່ງນັ້ນ | ຊີວິດຍັງຢູ່ນີ້ | ໃຫ້ຊອກແຕ່ແນວສຸກ |
| | ສິ່ງໃດມັນເປັນທຸກ | ໃຫ້ປ່ອຍວາງປະໄວ້ |
| | ອ້າຍຂໍອະທິຖານໃຫ້ | ຈິດໃຈນາງໃຫ້ຊ້ອຍຊື່ນ ນາງເອີຍ |
| | ທຸກວັນຄືນໃຫ້ເຈົ້າ | ຢ່າມີເສົ້າມົ່ນໝອງ ນ້ອງເອີຍ |
| ໂທດເດີ | ຖ້າວ່າຄຳອ້າຍເວົ້າ | ຫາກຜິດຕໍ່ໃຈນາງ |
| ໂທດເດີ | ຖ້າວ່າຄຳສອນຊາຍ | ຫາກບໍ່ກົງໃຈເຈົ້າ |
| ໂທດເດີ | ຖ້າວ່າຄຳກອນອ້າຍ | ຟັງໄປມັນບໍ່ຄ່ອງ |
| ໂທດເດີ | ຂໍໃຫ້ດອນນ້ອງຫລ້າ | ອະໄພອ້າຍຜູ້ຕອບມາ ນ້ອງເອີຍ. |

ຈາກ ອ. ທອມອ່ອນ (ຜູ້ເປັນອ້າຍ)